ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------------

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 3 12 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 14 OCT 2014

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ
# ແລະ ການເຄື່ອນໄຫວ ຂອງກົມປະກັນສັງຄົມ

- ອີງຕາມ ກົດໝາຍວ່າດ້ວຍ ການປະກັນສັງຄົມ ສະບັບເລກທີ 34/ສພຊ, ລົງວັນທີ 26 ກໍລະກົດ 2013;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 138/ນຍ, ລົງວັນທີ 4 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ອີງຕາມ ການຄົ້ນຄ້ວາຂອງກົມປະກັນສັງຄົມ ແລະ ການສະເໜີຂອງກົມຈັດຕັ້ງ-ພະນັກງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 648/ຮສສ.ຈຕ, ລົງວັນທີ 22 ກັນຍາ 2014.

## ລັດຖະມົນຕີວ່າການ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງກົມປະກັນສັງຄົມ ເພື່ອພັດທະນາ ແລະ ຄຸ້ມຄອງວຽກງານປະກັນສັງຄົມ ໃຫ້ເປັນລະບົບ, ເຂັ້ມແຂງ ແລະ ມີປະສິດທິພາບ.

### ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ກົມປະກັນສັງຄົມ ຂຽນເປັນຕົວອັກສອນຫຍໍ້ວ່າ "ປສ" ແມ່ນກົມວິຊາການໜຶ່ງ ທີ່ສັງກັດໃນໂຄງປະກອບກົງຈັກຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ລັດຖະມົນຕີ ໃນການຄົ້ນຄ້ວາ ແລະ ສ້າງນະໂຍບາຍ, ນິຕິກຳ, ແຜນຍຸດທະສາດ, ແຜນພັດທະນາວຽກງານປະກັນສັງຄົມ ພ້ອມທັງຄຸ້ມຄອງ ແລະ ກວດກາການຈັດຕັ້ງປະຕິບັດວຽກງານປະກັນສັງຄົມ ໃນຂອບເຂດທົ່ວປະເທດ.